ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ 9200
ນະຄອນຫຼວງວຽງຈັນ, ວັນທີ: 4 ກໍລະກົດ 2024

ຮຽນ: - ທ່ານ ຫົວໜ້າ ສໍານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 2/2024 ຄົ້ງວັນທີ 4 ກໍລະກົດ 2024.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 2/2024 ຂອງບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ ("ລອຊ" ຫຼື "ບໍລິສັດ") (ຕໍ່ໄປເອີ້ນວ່າ"ກອງປະຊຸມ") ແມ່ນໄດ້ຈັດຂຶ້ນໃນວັນທີ 4 ກໍລະກົດ 2024 ເວລາ 08:00 ໂມງ ທີ່ຫ້ອງການຂອງບໍລິສັດ. ໂດຍການເປັນປະທານຂອງທ່ານ ນາງ ປຸກີ ສະກອດ , ປະທານສະພາບໍລິຫານ, ພ້ອມດ້ວຍຄະນະສະພາບໍລິຫານອີກ 4 ທ່ານ ແລະ ຄະນະບໍລິຫານເປັນຜູ້ສັງເກດການ.

ໃນກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆ ແລະ ມີມະຕິທີ່ຕົກລົງ ດັ່ງລຸ່ມນີ້:

- ເຫັນດີກຳນົດເອົາວັນທີ 18 ກໍລະກົດ 2024 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນທີ່ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023.
- ເຫັນດີໃຫ້ມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ໃນວັນທີ 28 ສິງຫາ 2024 ເວລາ 13:30 ນາທີ (ການລົງທະບຽນເລີ່ມຕົ້ນ ຕອນສວາຍເວລາ 13:00) ທີ່ ບໍລິສັດລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ຊັ້ນ 3, ຕຶກ NNN, ຖະໜົນນຸວິຈັນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ. ຊຶ່ງວາລະທີ່ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີພິຈາລະນາ ແລະ ຮັບຮອງ ມີດັ່ງນີ້:
  (1) ພິຈາລະນາ ແລະ ຮັບຮອງເອົາບົດທັບທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022;
  (2) ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2024;
  (3) ພິຈາລະນາ ແລະ ຮັບຮອງ ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ຂອງບໍລິສັດ;
  (4) ພິຈາລະນາ ແລະ ຮັບຮອງ ການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດປີ 2023 ເພື່ອນຳໃຊ້ເປັນທຶນໃນການດຳເນີນທຸລະກິດ;
  (5) ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດ ປະຈຳປີ 2024 ຂອງບໍລິສັດ;
  (6) ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບພາຍນອກ ບໍລິສັດ Ernst & Young Lao Co., Ltd ເປັນຜູ້ກວດສອບຂອງບໍລິສັດ ປະຈຳປີ 2024;
  (7) ພິຈາລະນາ ແລະ ຮັບຮອງ ການກູ້ຢືມເງິນຈາກທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນອື່ນໆ ໃນສະກຸນເງິນກີບຈຳນວນ 70,000,000,000 - 120,000,000,000 ກີບ ແລະ ສະກຸນເງິນໂດລາຈຳນວນ 10,000,000 - 30,000,000 ໂດລາ;
  (8) ພິຈາລະນາ ແລະ ຮັບຮອງ ອື່ນໆ (ຖ້າມີ).

สแกนด้วย CamScanner

ກອງປະຊຸມໄດ້ປິດລົງເວລາ 11:00 ໂມງ ຂອງວັນດຽວກັນ.

ດ້ວຍຄວາມນັບຖືຢ່າງສູງ

ປະທານສະພາບໍລິຫານ

ທ່ານ Yuki Scott

สแกนด้วย CamScanner